ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ
ກົມພາສີ

ເລກທີ: 11091/ກພສ
ນະຄອນຫຼວງວຽງຈັນ, ວັນທີ: 01 ພະຈິກ 2023

# ແຈ້ງການ

ເຖິງ: - ຫົວໜ້າພາສີປະຈໍາ ແຂວງເຊກອງ;
- ຫົວໜ້າດ່ານພາສີສາກົນດາກຕະອອກ;

ເລື່ອງ: ການຈັດຕັ້ງປະຕິບັດນໍາໃຊ້ລະບົບ ການແຈ້ງພາສີແບບເອເລັກໂຕຣນິກ NSWA+, ການນໍາໃຊ້ລາຍເຊັນເອເລັກໂຕຣນິກ ແລະ ການຊໍາລະສະສາງຜ່ານ Finlink.

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມພາສີສະບັບເລກທີ 2059/ກງ, ລົງວັນທີ 29 ເມສາ 2021;
- ອີງຕາມຂໍ້ຕົກລົງຂອງກະຊວງການເງິນ ສະບັບເລກທີ 3009/ກງ, ລົງວັນທີ 27 ກັນຍາ 2022 ວ່າດ້ວຍການນໍາໃຊ້ລະບົບເອເລັກໂຕຣນິກ NSWA+ ເຂົ້າໃນຄຸ້ມຄອງການແຈ້ງພາສີ;
- ອີງຕາມ ຄໍາແນະນໍາຂອງລັດຖະມົນຕີ ກະຊວງການເງິນ ກ່ຽວກັບການແຈ້ງພາສີດ້ວຍລະບົບ NSWA+ ສະບັບເລກທີ 3011/ກງ, ລົງວັນທີ 27 ຕຸລາ 2022;
- ອີງຕາມ ຂໍ້ຕົກລົງຂອງກົມພາສີ ສະບັບເລກທີ 2434/ກພສ, ລົງວັນທີ 09 ສິງຫາ 2023 ວ່າດ້ວຍແຜນການຜັນຂະຫາຍາຍ ແລະ ຝຶກນໍາໃຊ້ລະບົບ NSWA+ ຂອງກົມພາສີຢູ່ດ່ານພາສີສາກົນເປົ້າໝາຍໃນຂອບເຂດທົ່ວປະເທດ;
- ອີງຕາມ ແຜນຜັນຂະຫຍາຍ ແລະ ຝຶກອົບຮົມນໍາໃຊ້ລະບົບການແຈ້ງພາສີ NSWA+ ໄປຍັງດ່ານພາສີສາກົນໃນຂອບເຂດທົ່ວປະເທດ ສະບັບເລກທີ 08220/ກພສ, ລົງວັນທີ 07 ກັນຍາ 2023.

ເພື່ອຮັບປະກັນ ໃຫ້ການນໍາໃຊ້ລະບົບການແຈ້ງພາສີແບບເອເລັກໂຕຣນິກ ຢູ່ ດ່ານພາສີສາກົນດາກຕະອອກ ໂດຍສອດຄ່ອງກັບລະບຽບການ ແລະ ນໍາໃຊ້ລະບົບດັ່ງກ່າວໄດ້ຢ່າງມີປະສິດທິພາບ, ຄ່ອງຕົວ ແລະ ເປັນເອກະພາບກັນໃນການຈັດຕັ້ງປະຕິບັດ.

**ກົມພາສີ ອອກແຈ້ງການ ດັ່ງນີ້ :**

1. ຜູ້ປະກອບການທີ່ໄດ້ດໍາເນີນກິດຈະການເປັນຜູ້ແຈ້ງພາສີທົ່ວໄປ ແລະ ຜູ້ບໍລິການແຈ້ງພາສີທີ່ມີຈຸດປະສົງໃນການນໍາເຂົ້າ-ສົ່ງອອກ ຜ່ານດ່ານພາສີສາກົນ ດາກຕະອອກ ແມ່ນໃຫ້ນໍາໃຊ້ລະບົບການແຈ້ງພາສີແບບເອເລັກໂຕຣນິກ NSWA+ ໂດຍຈະດໍາເນີນການປະກອບເອກສານໃບແຈ້ງພາສີເປັນລາຍລະອຽດຜ່ານລະບົບ ແລະ ແນບເອກະສານປະກອບເຂົ້າລະບົບທັງໝົດ ເລີ່ມແຕ່ **ວັນທີ 02 ພະຈິກ 2023** ເປັນຕົ້ນໄປ;

2. ຂັ້ນຕອນ ແລະ ວິທີການ ໃນການປະກອບໃບແຈ້ງພາສີເປັນລາຍລະອຽດ ເຂົ້າໃນລະບົບການແຈ້ງພາສີເອເລັກໂຕຣນິກ NSWA+ ແມ່ນໃຫ້ປະຕິບັດຕາມຄໍາແນະນໍາຂອງກະຊວງການເງິນ ສະບັບເລກທີ 3011/ກງ, ລົງວັນທີ 27 ກັນຍາ 2022, ວ່າດ້ວຍການແຈ້ງພາສີດ້ວຍລະບົບເອເລັກໂຕຣນິກ NSWA+;
    - ສໍາລັບ ຂັ້ນຕອນການກວດປ່ອຍສິນຄ້າ : ແມ່ນໃຫ້ດໍາເນີນການນໍາໃຊ້ ໃບບັນທຶກກວດປ່ອຍ ໃນການບັນທຶກການກວດກາສິນຄ້າ ແລະ ບັນທຶກລົງລະບົບ ASYCUDA/NSWA+.
3. ຂັ້ນຕອນ ແລະ ວິທີການລົງລາຍເຊັນເອເລັກໂຕຣນິກ ແມ່ນໃຫ້ປະຕິບັດຕາມຄໍາແນະນໍາຊົ່ວຄາວ ຂອງກະຊວງການເງິນ ສະບັບເລກທີ 3480/ກງ, ລົງວັນທີ 07 ພະຈິກ 2022, ວ່າດ້ວຍການນໍາໃຊ້ລາຍເຊັນເອເລັກໂຕນິກເຂົ້າໃນລະບົບຄຸ້ມຄອງລາຍຮັບງົບປະມານແຫ່ງລັດ;
4. ການຊໍາລະຄ່າພາສີ-ອາກອນ ແລະ ພັນທະອື່ນ ແມ່ນໃຫ້ຊໍາລະຜ່ານລະບົບການຊໍາລະແບບລວມສູນຂອງກະຊວງການເງິນ Finlink ທີ່ສາມາດຊໍາລະຜ່ານບັນດາທະນາຄານທຸລະກິດທີ່ຂຶ້ນກັບ;
5. ມອບໃຫ້ພາສີປະຈໍາ ແຂວງເຊກອງ ຊີ້ນໍາດ່ານພາສີສາກົນ ດາກຕະອອກ, ເພື່ອຮັບຜິດຊອບ ໃນການຈັດຕັ້ງປະຕິບັດ, ຄຸ້ມຄອງ ແລະ ນໍາໃຊ້ ລະບົບ NSWA+, ພ້ອມທັງປະສານສົມທົບກັບຄະນະຮັບຜິດຊອບຂອງ ກົມພາສີ ແລະ ຂະແໜງການກ່ຽວຂ້ອງ ເພື່ອພ້ອມກັນຈັດຕັ້ງປະຕິບັດ. ພ້ອມນັ້ນ ກໍໃຫ້ອອກແຈ້ງການ ຫຼື ເຜີຍແຜ່ ໃຫ້ແກ່ຜູ້ປະກອບການ ເພື່ອຮັບຊາບ ແລະ ດໍາເນີນການຂຶ້ນທະບຽນລາຍເຊັນເອເລັກໂຕນິກ ໂດຍໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດ;
6. ມອບໃຫ້ ພາສີປະຈໍາ ແຂວງເຊກອງ ຊີ້ນໍາດ່ານພາສີສາກົນ ດາກຕະອອກ, ຄັງເງິນແຫ່ງຊາດປະແຂວງເຊກອງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ສໍາເລັດເປັນຢ່າງດີ;
7. ໃນການຈັດຕັ້ງປະຕິບັດຕົວຈິງ ຫາກພົບຄອນຫຍຸ້ງຍາກ ຫຼື ບັນຫາ, ໃຫ້ສັງລວມລາຍງານຂໍທິດຊີ້ນໍາຈາກກົມພາສີ ເພື່ອດໍາເນີນການ ແກ້ໄຂທັນສະພາບ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານ ແລະ ພາກສ່ວນກ່ຽວຂ້ອງ ເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ຫົວໜ້າກົມພາສີ**

ກະຊວງການເງິນ
ກົມພາສີ

**ພູເຂົາຄໍາ ວັນນະວົງໄຊ**

ບ່ອນນໍາສົ່ງ:

- ພະແນກການເງິນແຂວງເຊກອງ 01 ສະບັບ ເພື່ອຊາບ;
- ຄັງເງິນແຫ່ງຊາດປະຈໍາຂວງເຊກອງ 01 ສະບັບ ເພື່ອຊາບ ແລະ ປະສານສົມທົບ;
- ຫ້ອງການພາສີປະຈໍາ ແຂວງເຊກອງ 01 ສະບັບ ເພື່ອຈັດຕັ້ງປະຕິບັດ;
- ພະແນກອ້ອມຂ້າງກົມພາສີ 01 ສະບັບ ເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດ.
- ທະນາຄານທີ່ດໍາເນີນການຊໍາລະຄ່າພາສີ-ອາກອນ 01 ສະບັບ ເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດ.